ຊຸກຍູ້ ໂຄງການສະໜັບສະໜູນຄ້ຳປະກັນສະບຽງອາຫານ ແລະ ຜະລິດເປັນສິນຄ້າ ຕາມມາດຕະຖານກະສິກຳສະອາດ ຢູ
Written by Thipphaphone Chanphengxay
Tuesday, 19 September 2017 07:28 - Last Updated Wednesday, 20 September 2017 08:29

ເພື່ອປະຕິບັດຕາມດຳລັດສະບັບເລກທີ 53/ລບ, ລົງວັນທີ 20/02/2015
ຊຶ່ງໄດ້ຖືກເອົາການຄ້ຳປະກັນສະບຽງອາຫານ ເປັນບຸລິມະສິດທຳອິດ ຫຼື
ເປັນເປົ້າໝາຍອັນດັບໜຶ່ງ ທີ່ຈະຕ້ອງສູ້ຊົນເພື່ອບັນລຸ ຍ້ອນເຫັນໄດ້ຄວາມໝາຍຄວາມ ສຳຄັນຂ
ອງວຽກງານດັ່ງກ່າວ ພັກ ແລະ ລັດຖະບານ ຈຶ່ງໄດ້ຈັດສັນງົບປະມານຈຳນວນໜຶ່ງ
ເພື່ອເປັນການສະໜັບສະໜູນ ເຂົ້າໃນການຈັດຕັ້ງປະຕິບັດ

ວຽກງານຕົວຈິງ ກົມປູກຝັງໄດ້ຮັບງົບປະມານຈຳນວນໜຶ່ງ
ເພື່ອໃຊ້ເຂົ້າໃນການປັບປຸງໂຄງລ່າງພື້ນຖານເພື່ອຮັບໃຊ້ວຽກງານຄ້ຳປະກັນສະບຽງອາຫານ
ແລະ ນຳໃຊ້ເຂົ້າໃນການຊຸກຍູ້ການຜະລິດສະບຽງອາຫານ ແລະ ເປັນສິນຄ້າ ໃນເປົ້າໝາຍ 10 ແຂວງ
ຜ່ານມາໄດ້ລົງເຜີຍແຜ່ກິດຈະກຳຂອງ ໂຄງການສະໜັບສະໜູນການຄ້ຳປະກັນສະບຽງອາຫານ
ຕາມມາດຕະຖານກະສິກຳສະອາດ.

ໃນລະຫວ່າງວັນທີ 17-21 ສິງຫາ ທີ່ຜ່ານມາ ທ່ານ ປອ ພັນປະດິດ ພັນດາລາ ຫົວໜ້າພະແນກແຜນການ
ແລະ ການຮ່ວມມື ພ້ອມດ້ວຍ ຫົວໜ້າຂະແໜງ ແລະ ວິຊາການ ໄດ້ລົງປະສານສົມທົບວຽກງານ
ໂຄງການສະໜັບສະໜູນການຄ້ຳປະກັນສະບຽງອາຫານ ແລະ ຜະລິດເປັນສິນຄ້າ
ຕາມມາດຕະຖານກະສິກຳສະອາດ ຮ່ວມກັບ ຫົວໜ້າພະແນກ, ຄະນະພະແນກ, ຂະແໜງປູກຝັງ ແລະ
ຂະແໜງແຜນການ ທີ່ ພະແນກກະສິກຳ ແລະ ປ່າໄມ້ ແຂວງໄຊຍະບູລີ ແລະ ແຂວງວຽງຈັນ.

 ໃນກອງປະຊຸມເຜີຍແຜ່ຄັ້ງນີ້ ເພື່ອການສະໜັບສະໜູນ ການຄໍ້າປະກັນສະບຽງອາຫານ ແລະ
ຜະລິດພືດເປັນສີນຄ້າ ຕາມມາດຕະຖານກະສິກຳສະອາດ ເພື່ອຮັບປະກັນໄດ້ເຖິງ
ການຈັດຕັ້ງປະຕິບັດກິດຈະກຳຂອງ ໂຄງການ
ສະໜັບສະໜູນການຄ້ຳປະກັນສະບຽງອາຫານ ແລະ ຜະລິດເປັນສິນຄ້າ
ຕາມມາດຕະຖານກະສິກຳສະອາດ ໃຫ້ມີຄວາມວ່ອງໄວ,
ທ່ວງທັນກັບລະດູການຜະລິດຂອງຊາວກະສິກອນ
 1 / 3

ຊຸກຍູ້ ໂຄງການສະໜັບສະໜູນຄ້ຳປະກັນສະບຽງອາຫານ ແລະ ຜະລິດເປັນສິນຄ້າ ຕາມມາດຕະຖານກະສິກຳສະອາດ ຢູ
Written by Thipphaphone Chanphengxay
Tuesday, 19 September 2017 07:28 - Last Updated Wednesday, 20 September 2017 08:29
ພ້ອມທັງສາມາດເຊື່ອມໂຍງກັນລະຫວ່າງແຜນວຽກຂອງສູນກາງ ແລະ ທ້ອງຖິ່ນ
ຢ່າງເປັນຂັ້ນຕອນລະອຽດ, ຮັບປະກັນທາງດ້ານຄຸນນະພາບ,
ມີຜົນຜະລິດເພື່ອຄ້ຳປະກັນສະບຽງ ແລະ ເພື່ອເປັນສິນຄ້າ
ທີ່ຜະລິດຕາມມາດຕະຖານ ແລະ ຫຼັກວິຊາການ ທີ່ແທດເໝາະກັບສະພາບຕົວຈິງ.

ຂ່າວໂດຍ : ນາງ ທິບພະພອນ ຈັນເພັງໄຊ

 2 / 3

ຊຸກຍູ້ ໂຄງການສະໜັບສະໜູນຄ້ຳປະກັນສະບຽງອາຫານ ແລະ ຜະລິດເປັນສິນຄ້າ ຕາມມາດຕະຖານກະສິກຳສະອາດ ຢູ
Written by Thipphaphone Chanphengxay
Tuesday, 19 September 2017 07:28 - Last Updated Wednesday, 20 September 2017 08:29
ກວດແກ້ : ຫຼິງຫຼ້ອງ ສິດທິໄຊ
 3 / 3